STAY SAFE MN

# ວັກຊີນໂຄວິດ-19 ໄຟເຊີ້ (Pfizer) ສຳລັບຄົນທີ່ມີອາຍຸ 18 ປີລົງມາ

11/3/2021

ໃນເວລານີ້, ວັກຊີນໂຄວິດ-19 ໄຟເຊີ້ (Pfizer) ເປັນວັກຊີນໂຄວິດ-19 ຊະນິດດຽວທີ່ໄດ້ເຮັດການສຶກສາ ແລະ ໄດ້ຮັບອະນຸຍາດໃຫ້ນຳໃຊ້ກັບຄົນທີ່ມີອາຍຸ 5 ປີຂຶ້ນໄປ. ຂໍ້ມູນຈາກການສຶກສາວັກຊີນໄຟເຊີ້ (Pfizer) ພົບວ່າວັກຊີນແມ່ນມີຄວາມ ປອດໄພ ແລະ ມີປະສິດທິພາບກັບຄົນທີ່ມີອາຍຸ 5 ປີ. ຜູ້ຜະລິດວັກຊີນອື່ນໆ ຍັງຄົງສືບຕໍ່ສຶກສາຄົ້ນຄ້ວາກັບກຸ່ມໄວລຸ້ນ ທີ່ອາຍຸ ຍັງນ້ອຍ ແຕ່ຍັງບໍ່ທັນໄດ້ຮັບການອະນຸຍາດຈາກກົມອາຫານ ແລະ ຢາຂອງສະຫະລັດອາເມລິກາ.

## ພໍ່ແມ່ ຫຼື ຜູ້ປົກຄອງ ຕ້ອງຍິນຍອມເຫັນດີໃຫ້ມີການສັກຢາວັກຊີນ

ພໍ່ແມ່ ຫຼື ຜູ້ປົກຄອງ ຕ້ອງຍິນຍອມເຫັນດີໃຫ້ມີການສັກຢາວັກຊີນໂຄວິດ-19 ໃຫ້ແດ່ເດັກນ້ອຍທີ່ມີອາຍຸ 5-17 ປີ, ຍົກເວັ້ນພາຍໃຕ້ສະຖານະການສະເພາະໃດໜຶ່ງ. ອີງຕາມລັດຖະບັນຍັດຂອງລັດມິນນີໂຊຕ້າ, ພາກທີ 144.341 ຫາ 144.347. ພວກເຮົາຊຸກຍູ້ໃຫ້ພໍ່ແມ່ ຫຼື ຜູ້ປົກຄອງ ເຂົ້າຮັບການນັດໝາຍສັກຢາວັກຊີນໃຫ້ກັບລູກຂອງພວກເຂົາ ເພື່ອຮຽນຮູ້ກ່ຽວກັບ ວັກຊີນໂຄວິດ-19 ແລະ ຍິນຍອມໃຫ້ລູກຂອງພວກເຂົາຮັບການສັກຢາວັກຊີນ.

ຖ້າພໍ່ແມ່/ຜູ້ປົກຄອງ ບໍ່ສາມາດພາລູກຂອງພວກເຂົາໄປຮັບການສັກຢາວັກຊີນ, ຈົ່ງສອບຖາມຜູ້ໃຫ້ບໍລິການກ່ຽວກັບ ຂັ້ນຕອນ ການຍິນຍອມ ແລະ ເຂົ້າເຖິງຂໍ້ມູນກ່ຽວກັບການອະນຸມັດນຳໃຊ້ສຸກເສີນ (EUA): ຂໍ້ມູນຂອງ EUA ວັກຊີນໂຄວິດ-19 ໄຟເຊີ້-ໄບໂອເທັກ (Pfizer-BioNTech) ສຳລັບຜູ້ໄດ້ຮັບ ແລະ ຜູ້ທີ່ໄດ້ຮັບການດູແລ ທີ່ມີອາຍຸ 12 ປີຂຶ້ນໄປ (www.fda.gov/media/153716/download) ຫຼື ຂໍ້ມູນ EUA ວັກຊີນໂຄວິດ-19 ໄຟເຊີ້-ໄບໂອເທັກ (Pfizer-BioNTech) ສຳລັບຜູ້ທີ່ໄດ້ຮັບ ແລະ ຜູ້ທີ່ໄດ້ຮັບການດູແລ ທີ່ມີອາຍຸ 5-11 ປີ (www.fda.gov/media/153717/download).
ອັນນີ້ຄືກັບຄຳຖະແຫຼງການຂໍ້ມູນຂອງຢາວັກຊີນ ທີ່ມີໃຫ້ ກ່ອນການສັກຢາວັກຊີນປົກກະຕິອື່ນໆ.
ຈົ່ງກວດເບິ່ງວ່າທຸກຄຳຖາມຂອງທ່ານໄດ້ຖືກຕອບໝົດແລ້ວ. ສຳລັບສະຖານທີ່ສັກຢາ ວັກຊີນຂອງຊຸມຊົນທີ່ໄດ້ຮັບການສະໜັບສະໜູນຈາກລັດ, ພໍ່ແມ່ ຫຼື ຜູ້ປົກຄອງຕ້ອງໃຊ້ສຳລັບເດັກທີ່ມີອາຍຸ 15 ປີລົງມາ.

## ເບິ່ງການນັດໝາຍສັກຢາວັກຊີນໂຄວິດ-19 ໄຟເຊີ້ (Pfizer)

ວັກຊີນໂຄວິດ-19 ແມ່ນຟຣີສຳລັບທຸກຄົນ. ທ່ານສາມາດໃຊ້ແຜນທີ່ໃນຢາວັກຊີນໂຄວິດ-19 ສຳລັບເດັກນ້ອຍ ແລະ ໄວລຸ້ນ (mn.gov/vaxforkids) ໃນການຄົ້ນຫາຜູ້ໃຫ້ບໍລິການການຢາວັກຊີນໂຄວິດ-19. ກ່ອນທີ່ທ່ານຈະໄປ,
ຈົ່ງແນ່ໃຈວ່າສະຖານທີ່ທີ່ທ່ານຈະໄປຮັບຢາວັກຊີນນັ້ນຜູ້ໃຫ້ບໍລິການໄດ້ມີຢາວັກຊີນໄຟເຊີ້ (Pfizer) ທີ່ເໝາະກັບອາຍຸຂອງລູກ ທ່ານບໍ.
ວັກຊີນສຳລັບເດັກນ້ອຍ 5 ຫາ 11 ປີ ແມ່ນມີປະລິມານໜ້ອຍກວ່າ ວັກຊີນໄຟເຊີ້ (Pfizer) ສຳລັບຄົນທີ່ມີອາຍຸ 12 ປີຂຶ້ນໄປ.
ບໍ່ແມ່ນຜູ້ໃຫ້ບໍລິການວັກຊີນໄຟເຊີ້ (Pfizer) ທຸກແຫ່ງຈະມີຂວດທີ່ຫຸ້ມຫໍ່ພິເສດ ສຳລັບຢາຂອງເດັກນ້ອຍ 5 ຫາ 11 ປີ ໃນການຈຳໜ່າຍຂອງພວກເຂົາ.

ທ່ານຍັງສາມາດຄົ້ນຫາການນັດໝາຍເພື່ອຮັບວັກຊີນໂຄວິດ-19 ໄດ້ທີ່ Vaccines.gov ແລະ ຜ່ານທາງ ພະແນກ ສາທາລະນະສຸກ ທ້ອງຖິ່ນທີ່ ມິນນີໂຊຕ້າ: ຄົ້ນຫາຄຣີນິກຢາວັກຊີນ (prepmod.health.state.mn.us/clinic/search).
ທັງສອງແມ່ນຊ່ວຍໃຫ້ທ່ານກັ່ນຕອງຜະລິດຕະພັນຂອງຢາວັກຊີນ ເພື່ອຄົ້ນຫາສິ່ງທີ່ເໝາະສົມສຳລັບທ່ານ.

Minnesota Department of Health | health.mn.gov | 651-201-5000
625 Robert Street North PO Box 64975, St. Paul, MN 55164-0975

ຕິດຕໍ່ health.communications@state.mn.us ເພື່ອຂໍຂໍ້ມູນໃນຮູບແບບອື່ນ. (Lao)